# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 23 ຕຸລາ 2022 (10-23-2022)

---

## ໄດ້ຍິນພຣະຄຳຂອງພຣະເຈົ້າ

*ມີຫຍັງແດ່ທີ່ທ່ານມັກຟັງ?*

**ຈຸດສຳຄັນໃນບົດຮຽນ:** ຍຶດເອົາໂອກາດທີ່ຈະໄດ້ຍິນພຣະຄຳຂອງພຣະເຈົ້າປະກາດແລະອະທິບາຍ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ສຳລັບພວກເຮົາສ່ວນໃຫຍ່, ການຟັງແມ່ນທັກສະການສື່ສານທີ່ໃຊ້ເລື້ອຍໆທີ່ສຸດຂອງພວກເຮົາ. ການຟັງແມ່ນສ່ວນນຶ່ງທີ່ສຳຄັນຂອງການສື່ສານ. ການສຶກສານຶ່ງຊີ້ໃຫ້ເຫັນວ່າສູງສຸດຂອງ 70 ຫາ 80 ເປີເຊັນຂອງເວລາຂອງພວກເຮົາສາມາດຖືກໃຊ້ໄປກັບການສື່ສານບາງປະເພດ-ແລະ 45 ເປີເຊັນຂອງເວລານັ້ນກ່ຽວຂ້ອງກັບການຟັງ. ນັ້ນໝາຍຄວາມວ່າໃນແຕ່ລະວັນ, <u>ພວກເຮົາໄດ້ດຶງດູດເອົາຄຳສັບທີ່ໄດ້ຍິນໄດ້ຟັງເຂົ້າໄປໃນສມອງຢ່າງຫຼວງຫຼາຍ!</u> ພວກເຮົາຮັບຟັງຄວາມຄິດເຫັນຂອງຫມູ່ເພື່ອນແລະຄອບຄົວຂອງພວກເຮົາ. ບາງທີທ່ານໄດ້ຮັບເອົາທັສນະຂອງພິທີກອນ(ໂຄສົກ)ໂທລະພາບຫຼືວິທະຍຸທີ່ທ່ານມັກ. ຫຼືບາງທີທ່ານອາສາສມັກໃຊ້ພອດແຄສທ໌(podcasts) ຫຼືຟັງປຶ້ມສຽງ. ບໍ່ວ່າທ່ານຈະຟັງຂໍ້ມູນຈາກແຫຼ່ງທີ່ມາຕ່າງໆ, ມັນອາດຈະແມ່ນທ່ານເອງ, ເຊັ່ນດຽວກັນກັບພວກເຮົາສ່ວນໃຫຍ່, ໄດ້ຟັງປະລິມານຂໍ້ມູນຫຼວງຫຼາຍຈາກຫຼາຍແຫຼ່ງ.

**ແຕ່ແມ່ນຫຍັງຄືສິ່ງທີ່ພວກເຮົາໄດ້ຍິນແທ້ໆ?** ຖ້າມກາງການຟັງທັງໝົດຂອງພວກເຮົາ, ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາເຮັດຫຼາຍກວ່າການຟັງຄຳນາມ ແລະຄຳກິລິຍາ; ພວກເຮົາຍັງຈະຕ້ອງໄດ້ຍິນແລະຮວບຮວມພຣະຄຳຂອງພຣະອົງ. ແລະຄືກັນກັບທີ່ພວກເຮົາຕັ້ງໃຈຈະບັນທຶກລາຍການໂທລະພາບທີ່ມັກ ຫຼືສມັກຮັບຂໍ້ມູນພອດແຄສທ໌ບາງລາຍການ, <u>ພຣະເຈົ້າຕ້ອງການໃຫ້ພວກເຮົາໄດ້ຍິນພຣະຄຳຂອງພຣະອົງສອນ**ຢ່າງສັດຊື່ເປັນປະຈຳ**</u> ແລະ<u>**ໂດຍຕັ້ງໃຈ**</u>.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ເນເຫມີຢາ 8:1-3</u>**

*1 ໃນເດືອນທີເຈັດ ຊາວອິສຣາເອນໄດ້ຍ້າຍກັນຢູ່ຕາມບ້ານເມືອງຂອງພວກເຂົາ ໃນມື້ທີນຶ່ງຂອງເດືອນນັ້ນ ພວກເຂົາທັງໝົດໄດ້ໂຮມ-*
*ກັນຢູ່ເດີ່ນຕໍ່ໜ້າປະຕູນໍ້າທີ່ນະຄອນເຢຣູຊາເລັມ ພວກເຂົາໄດ້ຮ້ອງຂໍປະໂລຫິດເອັສຣາ ຜູ້ຮອບຮູ້ໃນດ້ານພຣະທັມທີ່ພຣະຜູ້ເປັນເຈົ້າຊົງ*
*ມອບໃຫ້ພວກອິສຣາເອນຜ່ານທາງໂມເຊ. 2 ໃຫ້ເພິ່ນນຳເອົາປຶ້ມພຣະທັມອອກມາ ເອັສຣາກໍເອົາປຶ້ມນັ້ນອອກມາ ແລະນຳໄປຍັງບ່ອນທີ່*
*ປະຊາຊົນເຕົ້າໂຮມກັນຢູ່ ມີທັງຜູ້ຊາຍຜູ້ຍິງ ແລະເດັກນ້ອຍທີ່ເຂົ້າໃຈໄດ້. 3 ໃນເດີ່ນຕິດປະຕູນໍ້ານັ້ນ ເອັສຣາໄດ້ອ່ານພຣະທັມແຕ່ເຊົ້າຈົນ*
*ຮອດທ່ຽງ ພວກເຂົາທຸກຄົນຟັງຢ່າງຕັ້ງອົກຕັ້ງໃຈ.*

ພຣະເຈົ້າໄດ້ຊົງເລືອກຊົນຊາດອິສຣາເອນໃຫ້ເປັນປະຊາຊົນຂອງພຣະອົງ ກ່ອນຊົນຊາດອື່ນໆ. ທັງໝົດຕລອດປວັດສາດຂອງພວກເຂົາເຈົ້າ, ຢ່າງໃດກໍດີ, ຊາວອິສຣາເອນໄດ້ຮວບຮວມຄວາມສັມພັນແບບ ຂຶ້ນໆລົງໆກັບພຣະເຈົ້າ. ພວກຂົາເຈົ້າໄດ້ຮັບພຣະພອນຂອງການເຊື່ອຟັງ, ແລະພວກເຂົາເຈົ້າໄດ້ຮັບການລົງໂທດຈາກ ການບໍ່ເຊື່ອຟັງ. ຍ້ອນການບໍ່ເຊື່ອຟັງຢ່າງຕໍ່ເນື່ອງຂອງປະຊາຊົນ, ເມືອງເຢຣູຊາເລມໄດ້ຮັບຄວາມພິນາດຂອງກອງທັບທີ່ຮຸກຮານເຂົ້າມາ ແລະປະຊາຊົນໄດ້ປະສົບກັບການຕົກເປັນຊະເລີຍຂອງຊາວບາບີໂລນ. ຫຼັງຈາກ 70 ປີ, ສ່ວນທີ່ຍັງເຫຼືອໄດ້ກັບຄືນມາຈາກການເປັນຊະເລີຍ. ເມື່ອພວກເຂົາເຈົ້າກັບຄືນມາ, ພວກເຂົາເຈົ້າພະຍາຍາມສ້າງ

ພຣະວິຫານ ກຸງເຢຣູຊາເລັມ ແລະກຳແພງເມືອງໂດຍຮອບດ້ານຄືນໃໝ່. ເມື່ອພວກເຂົາເຈົ້າໄດ້ສ້າງກຳແພງຄືນໃໝ່ສຳເລັດແລ້ວ, "*ປະຊາຊົນທັງປວງໄດ້ເຕົ້າໂຮມກັນ*" ແລະ "*ຂໍໃຫ້ເອັຊຣານຳເອົາປຶ້ມບັນທຶກຂອງກົດໝາຍຂອງໂມເຊ*" (ຂໍ້ 1). ຊາວອິສຣາເອນໝົດຫວັງທີ່ຈະໄດ້ຍິນພຣະຄຳຂອງພຣະເຈົ້າອີກເທື່ອນຶ່ງ ແລະພວກເຂົາເຈົ້າຕັ້ງໃຈຢ່າງຍິ່ງທີ່ຈະໃຫ້ຕົນເອງຢູ່ໃນທ່າທີ ທີ່ຈະຟັງພຣະຄຳຂອງພຣະເຈົ້າ.

ທ່ານແລະຂ້າພະເຈົ້າຍັງຕ້ອງເພິ່ງພາອາສັຍພຣະຄຳຂອງພຣະເຈົ້າຢ່າງຮ້ອນຮົນເຊັ່ນກັນ. ດັ່ງນັ້ນ, ພວກເຮົາຄວນໃຊ້ຄວາມຕັ້ງໃຈອັນດຽວກັນກັບບັນດາບັນພະບຸຣຸດຝ່າຍວິນຍານໄດ້ສະແດງໃຫ້ພວກເຮົາໄດ້ເຫັນ. ພວກເຮົານຳເອົາຂໍ້ມູນເຂົ້າມາເປັນຈຳນວນຫຼວງຫຼາຍແຕ່ລະວັນ. ແນ່ນອນ, ບາງຂໍ້ມູນເຂົ້າມາຫາພວກເຮົາໂດຍບັງເອີນ, ແຕ່ພວກເຮົາຕັ້ງໃຈສແວງຫາສິ່ງທັງຫຼາຍທີ່ພວກເຮົາໄດ້ເຫັນແລະໄດ້ຍິນ. <u>ສິ່ງແລກແລະສຳຄັນທີ່ສຸດ, ພວກເຮົາສົມຄວນຕັ້ງໃຈຟັງ**ໂດຍເຈດຕະນາ** ພຣະຄຳຂອງພຣະເຈົ້າທີ່ອ່ານແລະສັ່ງສອນ.</u>

*ແມ່ນຫຍັງທີ່ເປັນອຸປສັກກີດກັ້ນບໍ່ໃຫ້ພວກເຮົາໄດ້ຍິນໄດ້ຟັງພຣະຄຳຂອງພຣະເຈົ້າ?*

ຊາວອິສຣາເອນບູຮານໄດ້ໃຫ້ຕົວຢ່າງອັນຍິ່ງໃຫຍ່ແກ່ພວກເຮົາກ່ຽວກັບວິທີວາງຕົວເພື່ອຈະໄດ້ຍິນພຣະຄຳຂອງພຣະເຈົ້າໃນ 2 ວິທີ ດັ່ງຕໍ່ລົງໄປນີ້:

- **ຈົ່ງຕັ້ງໃຈຮ່ວມກັນ**. ທ່ານແລະຂ້າພະເຈົ້າມີຄວາມຮັບຜິດຊອບສ່ວນຕົວໃນການອ່ານພຣະຄຳຂອງພຣະເຈົ້າດ້ວຍຄວາມອຸທິດຕົນສ່ວນຕົວ. ໃນເວລາດຽວກັນ, ພຣະຄັມພີຊີ້ໃຫ້ພວກເຮົາເຫັນເຖິງຄວາມຮັບຜິດຊອບໃນການພົບກັບຜູ້ເຊື່ອຄົນອື່ນໆເພື່ອໄດ້ຍິນພຣະຄຳຂອງພຣະເຈົ້າທີ່ອ່ານແລະສັ່ງສອນ.
- **ຈົ່ງຕັ້ງໃຈໃນເວລາແລະສະຖານທີ່**. ພວກເຮົາຕ້ອງຕັ້ງໃຈໃນການເຕົ້າໂຮມເພື່ອຈະໄດ້ຍິນພຣະຄຳຂອງພຣະເຈົ້າອ່ານແລະສັ່ງສອນ. ໃນພຣະຄັມພີເຮັບເຣີ ບົດທີ່ 10 ຂໍ້ 25, ຜູ້ຂຽນພຣະຄັມພີແນະນຳປະຊາກອນຂອງພຣະເຈົ້າບໍ່ໃຫ້ລະເລີຍການເຕົ້າໂຮມກັນ. ໃນຂນະທີ່ຜູ້ເຊື່ອສ່ວນຫລາຍມີເຈດຕະນາກ່ຽວກັບການເຕົ້າໂຮມໃນວັນອາທິດ, ຫຼັກການທີ່ສຳຄັນແມ່ນເພື່ອໃຫ້ພວກເຮົາຕອບສນອງເພື່ອຟັງພຣະຄຳຂອງພຣະເຈົ້າໂດຍເປັນປະຈຳ ແລະໂດຍເປັນລະບົບ (regular and systematic).

## 2. <u>ເນເຫມີຢາ 8:7-8</u>

*[7]ຕໍ່ມາ ທຸກຄົນໄດ້ລຸກຢືນຂຶ້ນຢູ່ບ່ອນເກົ່າ ແລ້ວຊາວເລວີບາງຄົນກໍໄດ້ອະທິບາຍພຣະທັມສູ່ເຂົາເຈົ້າຟັງ ຊາວເລວີນີ້ຄື ເຢຊູອາ ບານີ ເຊເຣບີຢາ ຢາມິນ ອັກກຸບ ຊັບເບທາຍ ໂຮດີຢາ ມາອາເສຢາ ເກລີຕາ ອາຊາຣີຢາໂຢຊາບັດ ຮານານ ແລະເປລີຢາ. [8]ພວກນີ້ໄດ້ແປແລະອະທິບາຍພຣະທັມຂອງພຣະເຈົ້າ ເພື່ອໃຫ້ປະຊາຊົນເຂົ້າໃຈ.*

ໃນຂນະທີ່ຄວາມຈິງພື້ນຖານຂອງພຣະຄຳພຣະເຈົ້າແມ່ນຈະແຈ້ງພຽງພໍທີ່ເດັກນ້ອຍສາມາດເຂົ້າໃຈໄດ້, ພຣະເຈົ້າໄດ້ຊົງຈັດຕຽມຜູ້ນຳແລະຄູສອນຢູ່ສເມີເພື່ອຊ່ວຍໃຫ້ປະຊາກອນຂອງພຣະອົງເຂົ້າໃຈ "ແຜນງານທັງໝົດຂອງພຣະເຈົ້າ" (ກຈກ 20:27). ໃນພຣະຄັມພີພາກພຣະສັນຍາເດີມ, ກຸ່ມຂອງຜູ້ນຳເຫຼົ່ານັ້ນແມ່ນ "ຊາວເລວີ" ໃນການຈັດຕັ້ງນີ້, ພວກເຂົາເຈົ້າ<u>ອ່ານ</u>ພຣະຄຳຂອງພຣະເຈົ້າ, <u>ອະທິບາຍ</u>ພຣະຄຳຂອງພຣະເຈົ້າ, ແລະ<u>ແປຄວາມໝາຍ</u> ພຣະຄຳຂອງພຣະເຈົ້າ "ເພື່ອໃຫ້ຜູ້ຄົນເຂົ້າໃຈໃນສິ່ງທີ່ໄດ້ອ່ານ" (ຂໍ້. 8). ນີ້ແມ່ນສິ່ງທີ່ສົມຄວນຈະເກີດຂຶ້ນໃນແຕ່ລະອາທິດໃນເມື່ອຄຣິສຕະຈັກມາເຕົ້າໂຮມກັນເພື່ອນະມັສການ. ສິດຍາພິບານນຳພາກອງປະຊຸມໂບດໂດຍຜ່ານຂໍ້ພຣະຄັມພີ ແລະເຊື່ອມຕໍ່ຄວາມຈິງຂອງພຣະເຈົ້າກັບຊີວິດປະຈຳວັນ. **ນັ້ນແມ່ນຄວາມຮັບຜິດຊອບທີ່ພຣະເຈົ້າໄດ້ຊົງປະທານໃຫ້ແກ່ລາວ(ສິດຍາພິບານ).**

ພຣະຄັມພີ ເນເຫມີຢາ ບົດທີ່ 8 ໄດ້ເນັ້ນໜັກຄວາມຮັບຜິດຊອບຂອງກອງປະຊຸມ (ສະມາມາຊິກຂອງຄຣິສຕະຈັກ) ເຊັ່ນດຽວກັນ. ໃນຂນະທີ່ພວກເຂົາເຈົ້າມາເຕົ້າໂຮມກັນເພື່ອຟັງພຣະຄຳຂອງພຣະເຈົ້າສັ່ງສອນ, "*ພວກເຂົາທຸກຄົນຟັງຢ່າງຕັ້ງອົກຕັ້ງໃຈ*" (ຂໍ້ 3). ເມື່ອໃດກໍຕາມທີ່ພວກເຮົາໄດ້ຍິນພຣະຄັມພີອ່ານແລະສັ່ງສອນ (read & teach), ພວກເຮົາສົມຄວນຈະໄດ້ຍິນດ້ວຍຫົວໃຈທີ່ມຸ້ງໝັ້ນຊອກຫາທີ່ຈະເຂົ້າໃຈພຣະຄຳຂອງພຣະເຈົ້າ. ການຮວມເອົາຄວາມຮັບຜິດຊອບຂອງທັງສອງຄື-<u>ສິດຍາພິບານ</u> ແລະ <u>ກອງປະຊຸມ</u>-ພວກ

ເຮົາຮຽນຮູ້ອົງປະກອບພື້ນຖານສໍາລັບການຊຸມນຸມປະຊາກອນຂອງພຣະເຈົ້າຢ່າງເກີດໝາກຜົນຝ່າຍຈິດວິນຍານ.

ຈົ່ງພິຈາລະນາຄໍາແນະນໍາຕໍ່ໄປນີ້ສໍາລັບການ<u>ມີສ່ວນຮ່ວມ</u>ແລະ<u>ມີຄວາມເຂົ້າໃຈ</u>ທີ່ດີກວ່າໃນສິ່ງທີ່ພວກເຮົາໄດ້ຍິນ:

- **ອະທິຖານ.** ອະທິຖານດ້ວຍເພງສັຣເສີນ(ພສສ 119:18). ທູນຂໍຕໍ່ພຣະເຈົ້າໃຫ້ຊ່ອຍທ່ານເຂົ້າໃຈ ແລະຜູ້ສອນນໍາ.
- **ເປີດພຣະຄັມພີຂອງຕົນເອງ.** ຕິດຕາມໄປກັບອາຈານຫຼືຄູສອນ ເພື່ອໃຫ້ພຣະຄໍາຢູ່ໃນສາຍຕາຂອງທ່ານຢູ່ສເມີ.
- **ຈົດບັນທຶກຂໍ້ຄວາມໃຫ້ດີ.** ຈົດຄໍາເທສນາແລະການສຶກສາພຣະຄັມພີ, ທ້າທາຍຄົນອື່ນໃຫ້ລິ້ມຄືນເບິ່ງເຣື່ອງນັ້ນ.
- **ສົນທະນາໃນທັນທີທັນໃດ.** ສົນທະນາກັບຄົນອື່ນໃນຫົວຂໍ້ "<u>ຄວາມຈິງອັນໃດທີ່ທ່ານເຫັນຫຼາຍທີ່ສຸດໃນພຣະຄັມພີ</u>"
- **ຈົດຈໍາໄວ້.** ຕໍ່ຕ້ານການລໍ້ລວງໃຫ້ "<u>ປິດປຶ້ມ</u>" ຫຼັງຈາກການເທສນາ ຫຼືການສຶກສາພຣະຄັມພີ. ທົບທວນຄືນພາຍຫຼັງ.

*ເມື່ອໃດທີ່ທ່ານໄດ້ຮັບຄວາມເຂົ້າໃຈເລິກຊຶ້ງ ໂດຍການໄດ້ຍິນພຣະຄັມພີທີ່ໄດ້ຖືກອະທິບາຍ?*

## 3. <u>ເນເຫມີຢາ 8:9-12</u>

*9ເມື່ອເຂົາເຈົ້າໄດ້ຍິນຂໍ້ພຣະທໍານັ້ນ ພວກເຂົາຮູ້ສຶກຕື້ນຕັນໃຈ ແລະຮ້ອງໄຫ້ຂຶ້ນແລ້ວເນເຫມີຢາ ເອັຊຣາແລະຊາວເລວີຜູ້*
*ອະທິບາຍພຣະທັມຂອງພຣະເຈົ້າໄດ້ບອກປະຊາຊົນວ່າ, "ມື້ນີ້ ເປັນວັນບໍຣິສຸດສໍາລັບພຣະຜູ້ເປັນເຈົ້າຂອງພວກທ່ານ ພວກ*
*ທ່ານບໍ່ຕ້ອງຮ້ອງໄຫ້ຄໍ່າຄວນ. 10ດຽວນີ້ ໃຫ້ພວກທ່ານພາກັນກັບເມືອກິນເຂົ້າສາ ຈົ່ງແບ່ງປັນອາຫານ ແລະນໍ້າອະງຸ່ນໃຫ້ຜູ້*
*ທີ່ບໍ່ມີພຽງພໍ ມື້ນີ້ ເປັນວັນບໍຣິສຸດສໍາລັບພຣະຜູ້ເປັນເຈົ້າ ສະນັ້ນ ບໍ່ຕ້ອງໂສກເສົ້າ ຄວາມຊື່ນບານທີ່ພຣະຜູ້ເປັນເຈົ້າຊົງປະ-*
*ທານໃຫ້ພວກທ່ານນັ້ນ ຈະເຮັດໃຫ້ພວກທ່ານມີເຫື່ອ ແຮງຂຶ້ນ." 11ພວກເລວີໄດ້ຍ່າງໄປມາທ່າມກາງປະຊາຊົນ ແລະເຮັດ-*
*ໃຫ້ພວກເຂົາງຽບໂດຍເວົ້າວ່າ, "ພາກັນມິດ ແລະຢ່າໄດ້ໂສກເສົ້າ ເພາະວ່າມື້ນີ້ເປັນມື້ບໍຣິໃໃໃໃໃໃໃໃໃໃໃສຸດ. 12ດັ່ງນັ້ນ*
*ປະຊາຊົນຈຶ່ງກັບເມືອບ້ານແລ້ວກິນເຂົ້າກິນນໍ້າຢ່າງມ່ວນຊື່ນ ພວກເຂົາໄດ້ແບ່ງປັນສິ່ງທີ່ເຂົາເຈົ້າມີໃຫ້ແກ່ຄົນອື່ນ ເພາະວ່າ*
*ພວກເຂົາເຂົ້າໃຈຕາມທີ່ໄດ້ຟັງເພິ່ນອ່ານນັ້ນ.*

ການວາງຕົວເອງໃນຕໍາແໜ່ງທີ່ຈະໄດ້ຍິນພຣະຄໍາຂອງພຣະເຈົ້າບໍ່ແມ່ນຈຸດຈົບໃນຕົວຂອງມັນເອງ. ພວກເຮົາຖືກຮຽກເອີ້ນໃຫ້ເຮັດຫຼາຍກວ່າພຽງແຕ່ໄດ້ຍິນໄດ້ຟັງເທົ່ານັ້ນ. ເມື່ອພວກເຮົາໄດ້ຍິນພຣະຄໍາຂອງພຣະເຈົ້າໂດຍແທ້ຈິງ, ມັນກໍ່ໃຫ້ເກີດຜົນທາງຈິດວິນຍານ. ໂດຍ<u>ຜ່ານວຽກງານຂອງພຣະວິນຍານບໍຣິສຸດ</u>, <u>ພຣະອົງໄດ້ນໍາພາເຮົາໄປສູ່ການຕອບສນອງສອງດ້ານ</u>: <u>ການກັບໃຈ</u>ແລະ<u>ການສເລີມສລອງ.</u>

ຈົ່ງສັງເກດເບິ່ງການຕອບສນອງຂອງຜູ້ຄົນ ຕາມທີ່ເອັຊຣາ ແລະຊາວເລວີໄດ້ແນະນໍາພວກເຂົາວ່າ: "ຄົນທັງປວງໄດ້ຮ້ອງໄຫ້ເມື່ອໄດ້ຍິນຄໍາຂອງກົດບັນຍັດ" (ຂໍ້ 9). ເມື່ອຜູ້ຄົນໄດ້ຍິນແລະເຂົ້າໃຈພຣະຄັມພີ, ຄວາມຈິງຂອງພຣະເຈົ້າໄດ້ປະເຊີນໜ້າກັບຄວາມບາບຂອງພວກເຂົາເຈົ້າ. ມັນໄດ້ເຕືອນພວກເພິ່ນເຖິງຄວາມເອົາແຕ່ໃຈຂອງພວກເຂົາເຈົ້າ ແລະ ຄວາມບໍຣິສຸດຂອງພຣະອົງ. ແລະດ້ວຍເຫດນີ້, ຊາວອິສຣາເອນຈຶ່ງໂສກເສົ້າຍ້ອນບາບຂອງພວກເຂົາເຈົ້າ. **<u>ການຕອບສນອງຂອງຜູ້ຄົນແມ່ນເໝາະສົມແທ້ໆ</u>**.

*ພວກເຮົາຈະວາງຕົວເອງໃຫ້ດີຂຶ້ນແນວໃດ ເພື່ອທີ່ຈະໄດ້ຍິນໄດ້ຟັງພຣະຄໍາຂອງພຣະເຈົ້າ?*

ນັ້ນຄືສິ່ງທີ່ພຣະຄໍາຂອງພຣະເຈົ້າເຮັດກັບພວກເຮົາ. ເມື່ອພວກເຮົາໄດ້ຍິນພຣະຄໍາອັນບໍຣິສຸດຂອງພຣະເຈົ້າ, ພວກເຮົາສົມຄວນຈະຮັບຮູ້ໃນທັນທີທັນໃດວ່າພວກເຮົາບໍ່ໄດ້ສົມພຣະກຽດຕິຍົດຂອງພຣະເຈົ້າ ຫຼືພວກເຮົາຫຼົ້ມເຫຼວໃນການເຊື່ອຟັງ. <u>ແຕ່ໃນຂ່າວປະເສີດຂອງພຣະກິດຕິຄຸນຂອງພຣະເຈົ້າ</u>, <u>ການຕັດສິນລົງໂທດແມ່ນພຽງແຕ່ເຄິ່ງນຶ່ງຂອງເຣື່ອງເທົ່ານັ້ນ</u>.

ເຖິງແມ່ນວ່າການຕອບໂຕ້ທີ່ເຕັມໄປດ້ວຍຄວາມໂສກເສົ້າຂອງຊາວອິສຣາເອນແມ່ນເຫມາະສົມ (ຂໍ້ 9), ຜູ້ນໍາຂອງພວກເຂົາເຈົ້າໄດ້ຊີ້ໃຫ້ພວກເພິ່ນໄປໃນທິດທາງທີ່ແຕກຕ່າງກັນ (ຂໍ້ 10). **ເປັນຫຍັງ?** ເພາະມື້ນັ້ນເປັນວັນສເລີມສລອງອັນສັກສິດ. <u>ພຣະເຈົ້າໄດ້ຊົງຟື້ນ</u>

ຟູຄວາມສໍາພັນທະພາບຂອງພຣະອົງກັບປະຊາກອນຂອງພຣະອົງ. **ນີ້ຄືພຣະຄຸນທີ່ໜ້າອັສຈັນຂອງພຣະເຈົ້າທີ່ເປັນໜ້າອັສຈັນທີ່ສຸດ.** ໂດຍຜ່ານພຣະກິດຕິຄຸນຂອງພຣະອົງ, ໄດ້ມີການໃຫ້ອະພັຍ. ການຊົງສະຖິດຂອງພຣະເຈົ້າຢູ່ກັບທ່ານ. ບໍ່ມີການກ່າວໂທດອີກຕໍ່ໄປ. **ຄວາມປິ້ມປິຕິຂອງພຣະອົງຈະເປັນຄວາມເຂັ້ມແຂງຂອງທ່ານ.**

*ມີວິທີທາງໃດແດ່ທີ່ກຸ່ມຂອງພວກເຮົາສາມາດສເລີມສລອງພຣະຄໍາຂອງພຣະເຈົ້າຮ່ວມກັນ?*

## ນໍາໃຊ້ໃນຊີວິດ

ທ່ານຈະເຕີບໂຕແນວໃດໃນການໄດ້ຍິນໄດ້ຟັງພຣະຄໍາຂອງພຣະເຈົ້າ? ຈົ່ງເລືອກເອົານຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ຈົ່ງຕອບສນອງຕໍ່ພຣະຄັມພີ.** ເມື່ອທ່ານອ່ານຫຼືໄດ້ຍິນພຣະຄໍາຂອງພຣະເຈົ້າ ແລະທ່ານຖືກຕັດສິນລົງໂທດຈົ່ງຈັດການກັບມັນ. ຈົ່ງສາຣະພາບບາບຂອງທ່ານ ແລະຫັນໜີຈາກມັນ. ຈົ່ງຂອບພຣະຄຸນພຣະເຈົ້າສໍາລັບການໃຫ້ອະພັຍແກ່ທ່ານແລະການປົດປ່ອຍທ່ານໃຫ້ເປັນອິສຣະ. ຊັ່ງຊາເບິ່ງການກັບໃຈຂອງທ່ານດ້ວຍການ ສເລີມສລອງ ການໃຫ້ອະພັຍ ແລະພຣະຄຸນຂອງພຣະເຈົ້າ.
- **ຈົ່ງມີຄວາມຕັ້ງໃຈ.** ທ່ານບໍ່ສາມາດກາຍເປັນຜູ້ຟັງທີ່ດີກວ່າໂດຍບັງເອີນ. ຈົ່ງທົບທວນຄືນຄໍາແນະນໍາສໍາລັບວິທີການທີ່ຈະກາຍເປັນຜູ້ຟັງທີ່ດີກວ່າ ເມື່ອທ່ານໄດ້ຍິນພຣະຄໍາຂອງພຣະເຈົ້າເທສນາຫຼືສັ່ງສອນ. ໃຫ້ຄໍາໝັ້ນສັນຍາທີ່ຈະປະຕິບັດຕາມການປະຕິບັດເຫຼົ່ານີ້ເປັນເວລາຫຼາຍອາທິດ ແລະກວດກາເບິ່ງວ່າສິ່ງເຫຼົ່ານີ້ສົ່ງຜົນກະທົບທາງບວກຕໍ່ການຮັກສາ ແລະການເຊື່ອຟັງພຣະຄໍາຂອງພຣະເຈົ້າດ້ວຍວິທີໃດ.
- **ຈົ່ງຊອກຫາຊຸມຊົນ.** ພຣະເຈົ້າຊົງມີພຣະປະສົງໃຫ້ທ່ານອ່ານພຣະຄໍາຂອງພຣະອົງເປັນການສ່ວນຕົວ, ແຕ່ທ່ານຍັງຄາດຫວັງທີ່ຈະໄດ້ຍິນພຣະຄໍາຂອງພຣະເຈົ້າໃນສະພາບການຂອງຊຸມຊົນຄຣິສະຕຽນ. ຈົ່ງໃຫ້ຄໍາໝັ້ນສັນຍາທີ່ຈະເປັນສ່ວນນຶ່ງຂອງກຸ່ມການສຶກສາພຣະຄັມພີຫຼືຫ້ອງຮຽນພຣະຄັມພີ. ຈົ່ງມຸ້ງໝັ້ນທີ່ຈະຊ່ວຍເຫຼືອເຊິ່ງກັນແລະກັນໃນການຄົ້ນພົບ ແລະດໍາເນີນຊີວິດຕາມພຣະຄໍາຂອງພຣະເຈົ້າ.

ມີສຸ້ມສຽງ ແລະກະແສສຽງຫຼວງຫຼາຍທີ່ແຍ່ງຊີງເອົາຄວາມສົນໃຈພວກເຮົາຢູ່ໃນວັທນະທັມຂອງພວກເຮົາ. **ແຕ່ຈົ່ງພາກັນມາຂອບພຣະຄຸນພຣະເຈົ້າສໍາລັບການຊົງປະທານ ວິທີການອັນຫຼວງຫຼາຍທີ່ຈະນໍາພາໃຫ້ພວກເຮົາໄດ້ຍິນໄດ້ຟັງພຣະຄໍາຂອງພຣະອົງທີ່ຊົງທໍາງານສັ່ງສອນເປັນປະຈໍາ**!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**